# ວັກຊິນ ອະຫິວາໝູ

## ນິຍາມ:

ວັກຊິນຊະນິດນີ້ ປຸງແຕ່ງ ຈາກເຊື້ອພັນ ໄວຣັສອະຫິວາໝູ, ປູກຜ່ານກະຕ່າຍ ແລ້ວເກັບເອົາມ້າມ ແລະ ລູກໝູໃນລຳໄສ້ ມາປະສົມໃສ່ 10 % ໃນເຊຣອມມ້າ. ບັນຈຸແກ້ວ ແລ້ວເອົາເຂົ້າຈັກດູດແຫ້ງ ດ້ວຍຄາມເຢັນລະບົບສູນອາກາດ. ແມ່ນວັກຊິນເຊື້ອເປັນຊະນິດຝຸ່ນ.




## ລັກສະນະອາການ

ພະຍາດນີ້ເກີດຂື້ນກັບໝູ ໂດຍບໍ່ຈຳແນກອາຍຸ ປະກົດການຂອງພະຍາດ: ໄຂ້ສູງ, ຂີ້ຕາໂພະ, ບໍ່ກິນອາຫານ, ຫາຍໃຈຫອບ, ຫິວນ້ຳ, ຖ້າໝູສີຂາວຈະເຫັນປ່ານແດງ ຫລື ເມັດສີແດງຕາມໜ້າໜັງອ່ອນຄື ພື້ນທ້ອງແອບແອຂາ. ມີອາການຮາກ, ຂີ້ຈອກ, ສຸດທ້າຍກໍ່ລ່ອຍເລັ້ມຈາກຂາຫລັງ ດັ່ງນັ້ນຈຶ່ງຍ່າງເຊໄປເຊມາ ເປີເຊັນການຕາຍ 80 — 95 %.

## ຂໍ້ແນະນຳ:

ໃຊ້ປ້ອງກັນພະຍາດອະຫິວາໝູ ສັກໝູທີ່ມີອາຍຸ 3 ເດືອນຂື້ນໄປ. ( ຫ້າມສັກໝູຖືພາ ).

## ວິທີໃຊ້:

ແກ້ວ 10 ເຂັມ ປະສົມນ້ຳກັ່ນ 10 ມລ. ສັກກ້າມຊີ້ນ ຄໍ ຫລື ກ້າມຂາຫລັງເບື້ອງໃນ ໂຕລະ 1 ມລ. ຫລັງຈາກປະສົມນ້ຳຢາແລ້ວ ຄວນໃຊ້ໃຫ້ໝົດພາຍໃນ 2 ຊົ່ວໂມງ.

- ບໍ່ຄວນໃຊ້ເຫລົ້າ ຫລື ຢາຂ້າເຊື້ອອື່ນໆ ເຊັດຕາມບໍລິເວນສັກຢາ, ກ່ອນ ຫລື ຫັລງສັກ.





ສັກກ້າມຊີ້ນຄໍ ຫລື ກ້າມຂາຫລັງເບື້ອງໃນ

## ໄລຍະຄຸ້ມກັນ:

ສັດຈະມີຄວາມຄຸ້ມກັນໄດ້ຫລັງຈາກສັກຢາໄດ້ 2 ອາທິດ ແລະ ຄຸ້ມກັນພະຍາດໄດ້ ຢ່າງນ້ອຍ 1 ປີ.

## ການເກັບຮັກສາ:

- ຮັກສາໃນອຸນນະພູມ 4 ອົງສາ ຄຸ້ມໄດ້ 3 ເດືອນ, ໃນອຸນນະພູມ ( — 30 ອົງສາ ຄຸ້ມໄດ້ 2 ປີ ).
- ເວລາຂົນຍ້າຍວັກຊິນ ຄວນເກັບຮັກສາຢູ່ໃນຄວາມເຢັນ ແລະ ບໍ່ໃຫ້ຖືກແສງແດດ.

## ແກ້ວບັນຈຸ:

ແກ້ວໜຶ່ງ ບັນຈຸ 10 ເຂັມ.

**ຕາຕະລາງ : ການນຳໃຊ້ຢາວັກຊິນ ອະຫິວາໝູ**

| ຊະນິດຢາວັກຊິນ | ອາຍຸສັດຕ້ອງໃຊ້ | ວິທີໃຊ້ | ໄລຍະຄຸ້ມກັນ |
|---|---|---|---|
| • ຢາວັກຊິນ ອະຫິວາໝູ | • ໃຊ້ກັບໝູ 3 ເດືອນຂື້ນໄປ | • ແກ້ວ 10 ເຂັມປະສົມນ້ຳກັ່ນ 10 ມລ.<br>• ສັກກ້າມຊີ້ນຄໍ ຫຼື ກ້າມຂາຫຼັງເບື້ອງໃນ ໂຕລະ 1 ມລ | 1 ປີ |

Laos Extension for Agriculture Project
P.O. Box 9159
Vientiane, Lao P.D.R.



ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ

ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ


# ການນຳໃຊ້ຢາ

# ວັກຊິນອະຫິວາໝູ



ຄັດຈາກ:  ປື້ມຄູ່ມືການນຳໃຊ້ວັກຊີນສຳລັບສັດ (1997)

ຮຽບຮຽງໂດຍ :

ໜ່ວຍງານຝຶກອົບຮົມສົ່ງເສີມ ຂັ້ນສູນກາງ (CETDU)


ສະໜັບສະໜູນໂດຍ :

ໂຄງການ ສົ່ງເສີມ ກະສິກຳ (LEAP)